**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ສຳນັກງານນາຍົກລັດຖະມົນຕີ** **ເລກທີ 86 /ນຍ**

ນະຄອນຫຼວງວຽງຈັນ, ວັນທີ 03 ສິງຫາ 2007

# ຂໍ້ຕົກລົງ
# ຂອງນາຍົກລັດຖະມົນຕີ
# ວ່າດ້ວຍ ການຈັດຕັ້ງປະຕິບັດກົນໄກ
# "ການບໍລິການຜ່ານປະຕູດຽວ" ຢູ່ອົງການບໍລິຫານລັດ

- ອີງຕາມ ມະຕິກອງປະຊຸມໃຫຍ່ ຄັ້ງທີ VIII ຂອງພັກປະຊາຊົນປະຕິວັດລາວ;
- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003;
- ອີງຕາມ ແຜນງານທີ 11 ຂອງ ລັດຖະບານ ວ່າດ້ວຍການປັບປຸງ, ຍົກລະດັບປະສິດທິພາບຂອງການບໍລິຫານລັດ.

**ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ອອກຂໍ້ຕົກລົງ:**

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດກ່ຽວກັບຂອບເຂດການນຳໃຊ້, ຫຼັກການຈັດຕັ້ງປະຕິບັດ ແລະ ບັນຂະຫຍາຍກົນໄກການບໍລິການຜ່ານປະຕູດຽວ ຢູ່ໃນອົງການບໍລິຫານລັດຂັ້ນທ້ອງຖິ່ນ ແລະ ຂະແໜງການຕ່າງໆຂັ້ນສູນກາງ.

ການປະຕິບັດກົນໄກການບໍລິການຜ່ານປະຕູດຽວ ແນໃສ່ປັບປຸງການພົວພັນລະຫວ່າງ ອົງການບໍລິຫານລັດກັບອົງການຈັດຕັ້ງຕ່າງໆ ແລະ ປະຊາຊົນໃຫ້ມີການປ່ຽນແປງໃໝ່ຢ່າງເລິກເຊິ່ງ, ຫຼຸດຜ່ອນຄວາມຫຍຸ້ງຍາກລຳຄານໃຈໃຫ້ແກ່ປະຊາຊົນ; ຕ້ານ ແລະ ສະກັດກັ້ນພະຍາດອາຊະຍາສິດ, ສໍ້ລາດບັງຫຼວງ, ຮັບສິນບົນໃນຖັນແຖວພະນັກງານ-ລັດຖະກອນ ແລະ ແນໃສ່ຍົກສູງຄວາມສັກສິດ ແລະ ປະສິດທິຜົນຂອງການຄຸ້ມຄອງບໍລິຫານລັດ.

**ມາດຕາ 2. ນິຍາມ**

"ກົນໄກການບໍລິການຜ່ານປະຕູດຽວ" ແມ່ນກົນໄກການແກ້ໄຂວຽກງານໃຫ້ແກ່ການຈັດຕັ້ງ ແລະ ປະຊາຊົນທີ່ນອນຢູ່ໃນຂອບເຂດສິດຂອງອົງການບໍລິຫານລັດ ນັບແຕ່ຮອດຮັບຄຳສະເໜີ, ຮັບເອກະສານຂອງການຈັດຕັ້ງ ແລະ ປະຊາຊົນ ຈົນຮອດຂອດສົ່ງຜົນຕອບ, ສົ່ງເອກະສານຄືນ ໂດຍຜ່ານໜ່ວຍບໍລິການຂອງລັດພຽງບ່ອນດຽວ.

**ມາດຕາ 3. ຫຼັກການ ການປະຕິບັດກົນໄກ "ການບໍລິການຜ່ານປະຕູດຽວ"**

3.1 ກຳນົດຂັ້ນຕອນຂອງການແກ້ໄຂ ແລະ ຈໍລະຈອນເອກະສານຈະຕ້ອງກະທັດຮັດ, ຈະແຈ້ງ, ງ່າຍດາຍ ແລະ ສອດຄ່ອງກັບກົດໝາຍ;

3.2 ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງອົງການປົກຄອງທ້ອງຖິ່ນແຕ່ລະຂັ້ນ, ແຕ່ລະພາກສ່ວນທີ່ກ່ຽວຂ້ອງ ແລະ ລະບົບການພົວພັນປະສານງານຂອງພາກສ່ວນດັ່ງກ່າວຕ້ອງຈະແຈ້ງ;

3.3 ທຸກລະບຽບການບໍລິການ, ຄ່າທຳນຽມ ແລະ ກຳນົດໄລຍະເວລາ ຈະຕ້ອງຕິດປະກາດໄວ້ຢ່າງເປີດເຜີຍໃຫ້ຜູ້ມາພົວພັນວຽກງານໄດ້ຮູ້ ແລະ ໄດ້ເຫັນຢ່າງຈະແຈ້ງ;

3.4 ຮັບຄຳຮ້ອງ, ຄຳສະເໜີ ຫຼື ເອກະສານຕ່າງໆ ຂອງປະຊາຊົນຢູ່ພຽງຈຸດດຽວ;

3.5 ການພົວພັນ-ປະສານງານກັບລະຫວ່າງພາກສ່ວນຕ່າງໆຂອງລັດ ເພື່ອແກ້ຄຳສະເໜີຂອງປະຊາຊົນ ແມ່ນໜ້າທີ່ ແລະ ຄວາມຮັບຜິດຊອບຂອງອົງການຈັດຕັ້ງລັດ ຫຼີກເວັ້ນບໍ່ໃຫ້ປະຊາຊົນໄປແລ່ນວິ່ງເຕັ້ນເອກະສານດ້ວຍຕົນເອງ;

3.6 ແກ້ໄຂວຽກງານໃຫ້ມີຄວາມສະດວກ, ວ່ອງໄວ ແລະ ທັນເວລາ.

**ມາດຕາ 4. ບັນດາອົງການບໍລິຫານລັດທີ່ສາມາດດຳເນີນການບໍລິການຜ່ານປະຕູດຽວ**

ໃຫ້ຈັດຕັ້ງປະຕິບັດການບໍລິການຜ່ານປະຕູດຽວ ຢູ່ໃນອົງການບໍລິຫານລັດ ຂັ້ນສູນກາງ ແລະ ທ້ອງຖິ່ນໃນຂອບເຂດທົ່ວປະເທດ ເປັນຕົ້ນແມ່ນໃນຫ້ອງວ່າການຂັ້ນແຂວງ, ຂັ້ນເມືອງ, ໃນບັນດາຂະແໜງການຂັ້ນສູນກາງ, ພະແນກການຕ່າງໆ ຂອງແຂວງ, ເຊິ່ງໃນເບື້ອງຕົ້ນໃຫ້ດຳເນີນການເຮັດທົດລອງຢູ່ບາງພະແນກການ ແລະ ບາງເມືອງເສຍກ່ອນ ແລ້ວຈຶ່ງຜັນຂະຫຍາຍກວ້າງອອກໄປສູ່ຫຼາຍຂະແໜງການ ແລະ ຫຼາຍເມືອງ.

**ມາດຕາ 5. ຂົງເຂດວຽກງານທີ່ເອົາເຂົ້າຜ່ານການບໍລິການຕາມກົນໄກປະຕູດຽວ**

ການຈັດຕັ້ງປະຕິບັດການບໍລິການຜ່ານປະຕູດຽວ ຖືກນຳໃຊ້ໃນບັນດາຂົງເຂດວຽກງານດັ່ງຕໍ່ໄປນີ້:

5.1 ຂັ້ນແຂວງ: ການລົງທຶນພາຍໃນ ຫຼື ຕ່າງປະເທດ, ຈົດທະບຽນທຸລະກິດ, ການປຸກສ້າງ, ການຄຸ້ມຄອງການຂົນສົ່ງ, ການຄຸ້ມຄອງທີ່ດິນ, ການຄຸ້ມຄອງພົນລະເມືອງ ແລະ ການແກ້ໄຂນະໂຍບາຍສັງຄົມ ຕາມການແບ່ງຂັ້ນຄຸ້ມຄອງ;

5.2 ຂັ້ນເມືອງ: ການຈົດທະບຽນທຸລະກິດ, ການຄຸ້ມຄອງການປຸກສ້າງ, ການຄຸ້ມຄອງທີ່ດິນ, ທະບຽນສານ ແລະ ການແກ້ໄຂນະໂຍບາຍສັງຄົມ ຕາມການແບ່ງຂັ້ນຄຸ້ມຄອງ;

5.3 ນອກຈາກນີ້, ອີງໃສ່ຈຸດພິເສດ ຫຼື ສະພາບຕົວຈິງຂອງແຕ່ລະແຂວງ, ນະຄອນ, ເມືອງ, ເທດສະບານ, ເຈົ້າແຂວງ, ເຈົ້າຄອງນະຄອນສາມາດກຳນົດເອົາຂົງເຂດວຽກງານອື່ນໆ ເຂົ້າຕື່ມໄດ້;

5.4 ຂັ້ນສູນກາງໃຫ້ແຕ່ລະກະຊວງ, ຂະແໜງການສົມທົບກັບທະບວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ ຄົ້ນຄວ້າເຮັດທົດລອງການບໍລິການຜ່ານປະຕູດຽວ ໃນບາງຂົງເຂດວຽກທີ່ເຫັນວ່າມີຄວາມຈຳເປັນກ່ອນ ແລ້ວຈຶ່ງຜັນຂະຫຍາຍກວ້າງອອກຫຼາຍຂົງເຂດ.

## ໝວດທີ II
## ໜ້າທີ່ ແລະ ຄວາມຮັບຜິດຊອບ
## ຈັດຕັ້ງຜັນຂະຫຍາຍກົນໄກ "ການບໍລິການຜ່ານປະຕູດຽວ"

**ມາດຕາ 6. ເຈົ້າແຂວງ, ເຈົ້າຄອງນະຄອນ ມີໜ້າທີ່ ແລະ ຄວາມຮັບຜິດຊອບດັ່ງນີ້:**

6.1 ກຳນົດຂົງເຂດ ຫຼື ຂະແໜງການຕ່າງໆ ທີ່ຈະນຳເຂົ້າສູ່ການປະຕິບັດຕາມ ກົນໄກການບໍລິການຜ່ານປະຕູດຽວ ຢູ່ພາຍໃນແຂວງ, ນະຄອນ, ເມືອງ, ເທດສະບານ;

6.2 ກຳນົດລະບຽບການພົວພັນປະສານງານ ແລະ ຂັ້ນຕອນການແກ້ໄຂວຽກງານແຕ່ລະປະເພດ ຢ່າງເປັນເອກະພາບກັນບົນພື້ນຖານໃຫ້ສອດຄ່ອງກັບລະບຽບກົດໝາຍວາງອອກ. ພິຈາລະນາຕົກລົງຍົກເລີກ ຫຼື ສະເໜີຂັ້ນເທິງ ທີ່ມີສິດອຳນາດຍົກເລີກບັນດາລະບຽບການທີ່ບໍ່ສອດຄ່ອງ ແລະ ສ້າງຄວາມຫຍຸ້ງຍາກລຳບາກໃຈໃຫ້ແກ່ການຈັດຕັ້ງ ແລະ ປະຊາຊົນ;

6.3 ກຳນົດຂອບເຂດ, ໄລຍະເວລາແກ້ໄຂວຽກງານ, ກຳນົດອັດຕາຄ່າທຳນຽມ, ຄ່າບໍລິການຕ່າງໆໃຫ້ສອດຄ່ອງກັບລະບຽບກົດໝາຍກຳນົດ.

**ມາດຕາ 7. ຫົວໜ້າພະແນກຂະແໜງການສາຍຕັ້ງຂັ້ນແຂວງ, ເຈົ້າເມືອງ, ຫົວໜ້າເທດສະບານ ມີໜ້າທີ່ ແລະ ຄວາມຮັບຜິດຊອບດັ່ງນີ້:**

7.1 ອອກລະບຽບພາຍໃນ, ກຳນົດຂັ້ນຕອນການຮັບ-ການສົ່ງເອກະສານ ໃຫ້ພາກສ່ວນກ່ຽວຂ້ອງຄົ້ນຄວ້າແກ້ໄຂການຍື່ນຂໍລາຍເຊັນ, ການສົ່ງເອກະສານຄືນໃຫ້ໜ່ວຍງານບໍລິການປະຕູດຽວ ແລະ ການສົ່ງຜົນຕອບໃຫ້ການຈັດຕັ້ງ ຫຼື ປະຊາຊົນຜູ້ມາພົວພັນ; ກຳນົດໜ້າທີ່ ແລະ ຄວາມຮັບຜິດຊອບຂອງພາກສ່ວນຕ່າງໆ ທີ່ກ່ຽວຂ້ອງໃນການປະຕິບັດກົນໄກ "ການບໍລິການຜ່ານປະຕູດຽວ"; ກຳນົດໜ້າທີ່ ແລະ ຄວາມຮັບຜິດຊອບຂອງພະນັກງານ, ເຈົ້າໜ້າທີ່ຂອງໜ່ວຍງານຮັບ ແລະ ສົ່ງຜົນຕອບ;

7.2 ຕິດປະກາດບັນດາລະບຽບການ, ບັນດາຄ່າທຳນຽມ, ຄ່າບໍລິການ ແລະ ກຳນົດໄລຍະເວລາແກ້ໄຂວຽກງານຢູ່ບ່ອນຮັບ ແລະ ກຳນົດໄລຍະເວລາແກ້ໄຂວຽກງານຢູ່ບ່ອນຮັບ ແລະ ສົ່ງເອກະສານ (ໜ່ວຍງານບໍລິການປະຕູດຽວ);

7.3 ຄັດເລືອກເອົາພະນັກງານ-ລັດຖະກອນ ບັນຈຸສັບຊ້ອນເຂົ້າຢູ່ໃນໜ່ວຍງານບໍລິການຜ່ານປະຕູດຽວໃຫ້ຖືກກັບມາດຖານຕຳແໜ່ງງານທີ່ໄດ້ກຳນົດ;

7.4 ສ້າງ ຫຼື ປັບປຸງໃຫ້ມີສະຖານທີ່ຕອນຮັບປະຊາຊົນ ທີ່ເຂົ້າມາໃຊ້ບໍລິການໃຫ້ເໝາະສົມ, ກວ້າງຂວາງ, ສະອາດຈົບງາມ ແລະ ສະດວກໃຫ້ແກ່ຜູ້ມາພົວພັນວຽກງານ;

7.5 ຈັດຝຶກອົບຮົມດ້ານເຕັກນິກວິຊາການ, ດ້ານມະນຸດສຳພັນ ໃຫ້ແກ່ພະນັກງານ-ລັດຖະກອນ ໃນໜ່ວຍງານຮັບ ແລະ ສົ່ງຜົນຕອບ;

7.6 ເຜີຍແຜ່, ໂຄສະນາດ້ວຍຮູບການຕ່າງໆທີ່ເໝາະສົມ ເພື່ອໃຫ້ການຈັດຕັ້ງ ແລະ ປະຊາຊົນໄດ້ຮັບຮູ້ ແລະ ເຂົ້າໃຈກ່ຽວກັບການບໍລິການຜ່ານປະຕູດຽວ.

**ມາດຕາ 8. ທີ່ຕັ້ງຂອງໜ່ວຍງານບໍລິການຜ່ານປະຕູດຽວ**

8.1 ໜ່ວຍບໍລິການປະຕູດຽວ ຂອງພະແນກການຕ່າງໆ ຂັ້ນແຂວງ ໃຫ້ສັງກັດຢູ່ໃນຫ້ອງການບໍລິຫານຂອງພະແນກ ແລະ ຢູ່ພາຍໃຕ້ການຄຸ້ມຄອງຂອງຫ້ອງການບໍລິຫານ;

8.2 ໜ່ວຍບໍລິການຜ່ານປະຕູດຽວ ຂອງອົງການປົກຄອງຂັ້ນແຂວງ, ຂັ້ນເມືອງ ແມ່ນສັງກັດຢູ່ໃນຫ້ອງວ່າການປົກຄອງຂັ້ນແຂວງ, ຂັ້ນເມືອງ ຢູ່ພາຍໃຕ້ການຄຸ້ມຄອງບັນຊາໂດຍກົງ ຂອງຫົວໜ້າຫ້ອງວ່າການປົກຄອງຂັ້ນແຂວງ, ຂັ້ນເມືອງ.

**ມາດຕາ 9. ໜ້າທີ່ ແລະ ຄວາມຮັບຜິດຊອບຂອງກະຊວງ, ອົງການທຽບເທົ່າກະຊວງ, ອົງການທີ່ຂຶ້ນກັບສໍານັກງານນາຍົກລັດຖະມົນຕີ.**

ບັນດາກະຊວງ, ອົງການທຽບເທົ່າກະຊວງ ແລະ ອົງການທີ່ຂຶ້ນກັບສໍານັກງານນາຍົກລັດຖະມົນຕີ ນອກຈາກຈັດຕັ້ງປະຕິບັດວຽກງານການບໍລິການຜ່ານປະຕູດຽວຢູ່ສໍານັກງານອົງການຂອງຕົນແລ້ວ, ຍັງມີໜ້າທີ່ ແລະ ຄວາມຮັບຜິດຊອບແບ່ງຂັ້ນ, ແບ່ງວຽກ ແລະ ຄວາມຮັບຜິດຊອບ ໃນຂະແໜງການຂອງຕົນໃຫ້ອົງການປົກຄອງຂັ້ນແຂວງ, ຂັ້ນເມືອງກໍານົດລະອຽດ, ຈະແຈ້ງ ແລະ ກະທັດຮັດລະບຽບການແກ້ໄຂວຽກງານໃຫ້ການຈັດຕັ້ງ ແລະ ປະຊາຊົນໃນຂົງເຂດ, ຂະແໜງການທີ່ຕົນເອງຮັບຜິດຊອບຄຸ້ມຄອງ. ພ້ອມກັນນັ້ນກໍ່ທົບທວນຄືນບັນດາລະບຽບການຕ່າງໆ ຂອງຂະແໜງການຂອງຕົນ ເພື່ອສ້າງເງື່ອນໄຂ ແລະ ອໍານວຍຄວາມສະດວກໃຫ້ແກ່ການປັບປຸງກົນໄກການປະສານງານ.

**ມາດຕາ 10. ງົບປະມານສໍາລັບການຈັດຕັ້ງປະຕິບັດກົນໄກການບໍລິການຜ່ານປະຕູດຽວ ແມ່ນໃຫ້ນໍາໃຊ້ງົບປະມານປະຈໍາປີຂອງອົງການບໍລິຫານລັດຂັ້ນຕ່າງໆຂອງໃຜມັນ.**

## ໝວດທີ III
## ບົດບັນຍັດສຸດທ້າຍ

**ມາດຕາ 11.** ເພື່ອຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ປະສົບຜົນສໍາເລັດ ລັດຖະບານຖືເອົາວຽກປັບປຸງການບໍລິການຂອງລັດ ໂດຍຜ່ານລະບົບບໍລິການຜ່ານປະຕູດຽວ ເປັນວຽກຈຸດສຸມ ແລະ ສໍາຄັນເພື່ອປັບປຸງກົນໄກ, ລະບຽບການບໍລິຫານຂອງລັດຢູ່ແຕ່ລະຂັ້ນ, ມີການຊີ້ນໍາເອກະພາບແຕ່ສູນກາງລົງຮອດທ້ອງຖິ່ນ ໂດຍມີການແຕ່ງຕັ້ງຄະນະຮັບຜິດຊອບຊີ້ນໍາຂັ້ນສູນກາງ, ຂັ້ນແຂວງ ແລະ ຂັ້ນເມືອງທີ່ກ່ຽວຂ້ອງ, ສູນກາງແມ່ນຢູ່ພາຍໃຕ້ການຊີ້ນໍາຂອງລັດຖະມົນຕີວ່າການກະຊວງໂດຍກົງ, ຢູ່ຂັ້ນທ້ອງຖິ່ນແມ່ນຢູ່ພາຍໃຕ້ການຊີ້ນໍາຂອງເຈົ້າແຂວງ ແລະ ເລຂາພັກແຂວງ.

ຢູ່ແຕ່ລະແຂວງໃຫ້ເລືອກເອົາບາງຂະແໜງການ ແລະ ບາງເມືອງທີ່ມີເງື່ອນໄຂພຽງພໍທາງດ້ານບຸກຄະລາກອນ, ການເງິນ, ການປະສານງານຈັດຕັ້ງປະຕິບັດທົດລອງກ່ອນ, ແລ້ວຈຶ່ງຖອດຖອນບົດຮຽນເພື່ອຜັນຂະຫຍາຍໄປຫຼາຍຂະແໜງການ ແລະ ເມືອງອື່ນໆ.

**ມາດຕາ 12.** ລັດຖະມົນຕີ, ຫົວໜ້າອົງການບໍລິຫານລັດຂັ້ນຕ່າງໆຂອງສູນກາງ, ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງວຽງຈັນ ມີໜ້າທີ່ຮັບຜິດຊອບຊີ້ນໍາການຜັນຂະຫຍາຍຈັດຕັ້ງປະຕິບັດການບໍລິການຕາມກົນໄກປະຕູດຽວ ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນຂອງຕົນ ນັບແຕ່ວັນທີ 01 ກັນຍາ 2007 ເປັນຕົ້ນໄປ. ແຕ່ລະປີໃຫ້ສະຫຼຸບສັງເກດຕີລາຄາ ແລະ ຖອດຖອນບົດຮຽນການຈັດຕັ້ງປະຕິບັດ ແລະ ໃຫ້ລາຍງານມາຍັງທະບວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ ເພື່ອສັງລວມ ແລ້ວລາຍງານນາຍົກລັດຖະມົນຕີ.

**ມາດຕາ 13.** ທະບວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ ສະຫຼຸບຖອດຖອນບົດຮຽນການເຮັດທົດລອງກົນໄກການບໍລິການຜ່ານປະຕູດຽວ ຢູ່ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ ສ້າງເປັນປຶ້ມຄູ່ມື, ແນະນໍາການ

ຜັນຂະຫຍາຍ ແລະ ຈັດການຝຶກອົບຮົມໃຫ້ແກ່ບາງຂະແໜງການຂັ້ນສູນກາງ ແລະ ທ້ອງຖິ່ນກ່ຽວກັບການນຳໃຊ້ກົນໄກການບໍລິການຜ່ານປະຕູດຽວ ຢູ່ໃນຂອບເຂດທົ່ວປະເທດ; ປະສານສົມທົບກັບກະຊວງ, ຂະແໜງການທີ່ກ່ຽວຂ້ອງເພື່ອຕິດຕາມ ແລະ ກວດກາການປະຕິບັດ ຂໍ້ຕົກລົງສະບັບນີ້, ສະຫຼຸບລາຍງານໃຫ້ຄະນະຊີ້ນຳຂັ້ນສູນກາງ ແລະ ລາຍງານລັດຖະບານຢ່າງ ເປັນປະຈຳ.

**ມາດຕາ 14.** ສຳລັບເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ ໃຫ້ມີການສືບຕໍ່ສະໜັບສະໜູນການເຮັດການບໍລິການຜ່ານປະຕູດຽວ ເພື່ອໃຫ້ກາຍເປັນຕົວແບບໃຫ້ແກ່ບ່ອນອື່ນ ໂດຍປັບປຸງບາງວຽກທີ່ຍັງບໍ່ສອດຄ່ອງ ແລະ ຂະຫຍາຍເອົາວຽກອື່ນເຂົ້າເພີ່ມເມື່ອມີເງື່ອນໄຂ.

**ມາດຕາ 15.** ໃນການຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍກົນໄກການບໍລິການຜ່ານປະຕູດຽວ ຫາກມີບັນຫາຫຍຸ້ງຍາກ, ແກ້ໄຂບໍ່ໄດ້ໃຫ້ລາຍງານມາຍັງ ທະບວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ ເພື່ອສັງລວມສະເໜີນາຍົກລັດຖະມົນຕີພິຈາລະນາແກ້ໄຂ.

**ມາດຕາ 16.** ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ນາຍົກລັດຖະມົນຕີແຫ່ງສປປລາວ**

ບົວສອນ ບຸບຜາວັນ